# ຊີວະປະຫວັດ

## ພຣະຣາຊະຄູໂພນສະເມັກ

## ( ຍາຄູຂີ້ຫອມ )



ຜູ້ຄົ້ນຄ້ວາ : ຄຳເພົາ ພອນແກ້ວ

25 ທັນວາ 2007

# ຊີວະປະຫວັດ

## ພຣະຣາຊະຄູໂພນສະເມັກ

## ( ຍາຄູຂີ້ຫອມ )



ຜູ້ຄົ້ນຄ້ວາ : ຄຳເພົາ ພອນແກ້ວ

---

ຈັດພິມໂດຍ : ທ່ານ ບັນໄທ ຊອນປັນຍາ ແລະ ທ່ານ ສິນປອງ ໄຊສະໝີ
ຂະໜາດ 14,5 × 20,5 ຊມ
ເລກທະບຽນພິມ 40/ພຈ. 12022008
ພິມຄັ້ງທີໜຶ່ງ : ປີ 2008
ຈຳນວນພິມ : 2.000 ເຫຼັ້ມ
ພິມທີ່ : ໂຮງພິມສີສະຫວາດ.

ສະຫງວນລິຂະສິດ


B. Taôpoung
Don Sân
B. Nonghoy
B. Hangdon
B. Nakham-Nua
B. Houayhai
B. Navèng
B. Houakhônglèm
B. Nalan
B. Nasènphan
B. Hat
B. Sènlam
B. Thaman
B. Houaygnang
B. Houakhông-Gnai
B. Dông
B. Khôngtaiphoum
B. Xôngpuay
Don Ko
Don Hi-Gnai
B. Dônhèt
B. Phônvisai
B. Nadi
B. Donhiveun
B. Veunthong
B. Sônggnang
B. Phangkhao
B. Houayphai
B. Boung
B. Nasômhông
B. Xanva
B. Samkhang
Don Không
B. Sènhat-Gnai
B. Sènhat-Noy
B. Phoumao
KHÔNG
Don Khamao
B. Khamao
B. Pakxé
B. Hatxaykhoum
270 Ph. Mailai
B. Hangkhamao
B. Muangsèn-Nua
B. Muangsèn-Tai
B. Na
B. Nokkôk
B. Veunkham
B. Hinsiou-Tai
B. Hat
NAM KHÔNG
B. Houaphiman
B. Phôn
B. Phondèng
Don Phoum
B. Hinhong
146 Ph. Kadan
B. Doa-Tai
B. Mouang
B. Kadan
B. Khinak
B. Sétnam-Om
B. Thamak-Hén
B. Thaphao
B. Sètphailom
Don Lông
B. Hangkông
B. Kongkèng
B. Kèngkoum
B. Sétsavan
B. Lôppadi-Kang
B. Xiangdt
B. Lôppadi-Phôtak
B. Nakasang
Don Lôppadi
B. Lôppadi-Nakhon
B. Veunsôm
B. Dônxang
Don Xang
B. Houadondet
Don Dé
B. Khon-Nua
B. Khon-Tai
Don Sânfat
B. Hangkhon
B. Hangkhonsadam
NAM KHÔNG

ແຜ່ນທີ່ດອນໂຂງ

# ສາລະບານ


ຊີວະປະຫວັດພຣະຣາຊະຄູໂພນສະເມັກ .................... ໜ້າ 1

1 ( ຕອນ ) ໄດ້ນິມິດຝັນ ( ອັນມະຫັດສະຈັນ ) ................ ໜ້າ 4

2 ( ຕອນ ) ສາມະເນນ ອັດຈະຣິຍະ ( ເກັ່ງພິເສດ ) .......... ໜ້າ 7

3 ( ຕອນ ) ນຳພາຍາດໂຍມອົບພະຍົກຈາກວຽງຈັນ ......... ໜ້າ 12

4 ( ຕອນ ) ອົບພະຍົກກັບຄືນດິນລາວ ......................... ໜ້າ 15

5 ບັນດາຜົນງານຂອງພຣະຄູໂພນສະເມັກ .................... ໜ້າ 16

(1) ສ້າງພະເຈດີ ຫຼື ທາດພະນົມ (ພະນົມເປັນ) ................ ໜ້າ 21

(2) ສ້າງພຣະພຸດທະຮູບ ພະແສນ .................................. ໜ້າ 22

(3) ສ້າງເຈດີ ແລະ ລະຄັງໃຫຍ່ໄວ້ທີ່ເມືອງໂຂງ ................ ໜ້າ 24

(4) ສ້າງພຣະພຸດທະຮູບນຳໄປປະດິດສະຖານໄວ້ທີ່ດອນແດງ ໜ້າ 26

(5) ບູລະນະພຣະທາດພະນົມ .......................................... ໜ້າ 27

(6) ພຣະຄູໂພນສະເມັກເຖິງແກ່ພະນິພານ ....................... ໜ້າ 28

- ປຶ້ມອ້າງອີງ ............................................................. ໜ້າ 30

- ພົງສາວະດານເມືອງໂຂງ ............................................ ໜ້າ 32

- ເອກະສານຄົ້ນຄ້ວາ ແລະ ບ່ອນອ້າງອີງ ........................ ໜ້າ 48

# ຄຳນຳຂອງຜູ້ຄົ້ນຄ້ວາ

ໃນສະພາບທີ່ຂ່າວສານຂໍ້ມູນໃນໂລກປັດຈຸບັນຂະຫຍາຍຕົວແຮງ ດ້ວຍຫຼາຍຮູບແບບ, ຈົນເກືອບເວົ້າໄດ້ວ່າ ບໍ່ມີປະເທດໃດຈະບໍ່ຮູ້ປະເທດອື່ນໄດ້ ຖ້າຫາກມີຄວາມສົນໃຈແດ່. ແຕ່ປານນັ້ນ, ຢູ່ປະເທດເຮົາເອງ, ຍັງມີຫຼາຍໆຄົນທີ່ບໍ່ຮູ້ປະເທດຂອງຕົນເອງດີເທົ່າກັບຮູ້ປະເທດອື່ນຊໍ້າ, ທັງນີ້ກໍຍ້ອນບໍ່ຢາກຊອກຮູ້ ຫຼື ເຖິງວ່າຈະຊອກຮູ້ປານໃດ ກໍບໍ່ມີໃຜຈະຂຽນອອກໃຫ້ຮູ້. ຈົນວ່າບາງຄັ້ງຄາວ, ສິ່ງທີ່ເປັນຂອງຕົນເອງແທ້ໆມາແຕ່ດັ້ງເດີມ, ຕັ້ງແຕ່ບັນພະບູລຸດຕົນເອງສ້າງໄວ້, ຍ້ອນບໍ່ຊອກຢາກຮູ້, ກໍ່ເລີຍເຊື່ອວ່າເປັນຂອງປະເທດອື່ນໄປກໍມີ, ຍ້ອນເຮົາເອງຈຳກັດການຂຽນດ້ວຍຫຼາຍສາເຫດ.

ດັ່ງນັ້ນ, ພວກເຮົາຈຳເປັນຕ້ອງໄດ້ອອກແຮງຊ່ວຍກັນສົ່ງເສີມການຄົ້ນຄ້ວາພື້ນຖານ ມູນເຊື້ອຕົນເອງໄວ້ໃຫ້ລູກຫຼານຮັບຮູ້ໃຫ້ຖືກຕ້ອງ, ແມ່ນຢຳ, ແລະ ຊັດເຈນຈົນໃຫ້ສາມາດເວົ້າຕໍ່ໆໄປໃຫ້ຖືກຕ້ອງໄດ້ຕະຫຼອດໄປ, ຈຶ່ງຈະສາມາດເຊື່ອໝັ້ນຕໍ່ກຽດ ແລະ ສັກສີຂອງຊາດຕົນເອງໄດ້. ໂດຍສະເພາະຢ່າງຍິ່ງ ໃນທຸກວັນນີ້ ພາສາລາວເຮົາມີກົກ, ມີເຄົ້າ, ມີຄວາມອຸດົມຮັ່ງມີ, ມີຂໍ້ຄວາມທີ່ສະແດງເຖິງອາລົມ ແລະຈິດໃຈອອກຢ່າງອ່ອນຊ້ອຍໄດ້ດີມາແຕ່ສະໄໝປູ່ຍ່າຕາຍາຍ; ແຕ່ຍ້ອນເຮົາບໍ່ໃຫ້ຄວາມສະດວກສົ່ງເສີມໃຫ້ຄົນຂຽນ, ສົ່ງເສີມໃຫ້ຄົນພິມ ແລະ ເວົ້າອອກເລື້ອຍໆຕໍ່ມວນຊົນ, ພາສາຂອງເຮົາກໍເລີຍກາຍເປັນພາສາ "ຊອດກະຈາ" ຖືກຈຳກັດໂດຍທຳມະຊາດ, ບໍ່ຮູ້ວ່າຄວາມໃດເປັນຂອງຕົນ, ຄວາມໃດເປັນຂອງເພິ່ນເວົ້າ ບາງເທື່ອເພິ່ນເອົາຄວາມເວົ້າຂອງຕົນໄປແທ້ໆ ກໍຍັງເຂົ້າໃຈວ່າຕົນເວົ້າຄືເພິ່ນ ແລະ ເອົາຄວາມເພິ່ນມາໃຊ້ກໍມີ.

ຍ້ອນແນວຄິດຢາກໃຫ້ຜູ້ມີເງື່ອນໄຂສົ່ງເສີມການພິມໃຫ້ໄດ້ຫຼາຍ, ໃຫ້ປະຊາຊົນໄດ້ມີໂອກາດໄດ້ອ່ານຫຼາຍ, ຂ້າພະເຈົ້າຈຶ່ງຕັດສິນໃຈຄົ້ນຄ້ວາ ແລະ ຊອກວິທີໄດ້ພິມເຜີຍແຜ່ເລື່ອງ " ຢາຄູຂີ້ຫອມ " ນີ້ຈົນໄດ້ອອກສູ່ສາຍຕາທ່ານຜູ້ອ່ານ.

ຈຶ່ງຂໍຖືໂອກາດນີ້ຂອບອົກຂອບໃຈທຸກໆທ່ານ ທີ່ໄດ້ຊ່ວຍໃຫ້ຄວາມສະດວກນັບແຕ່ມື້ຊອກຫາວັດໂພນສະເມັກຈົນຮອດຜູ້ຊ່ວຍໃນການຈັດພິມປຶ້ມຫົວນີ້ຈົນແລ້ວ.

ຂໍສະແດງຄວາມຮັກແພງມານະທີ່ນີ້ດ້ວຍ.

ວຽງຈັນ, ວັນທີ່ 20/05/2008.

ສຸພາສິດບູຮານລາວ :

" ຢ່າຟ້າວໄລລືມເຊື້ອ ສາຍພັນພົງເຜົ່າ ເຮົາເນີ
ຢ່າຟ້າວລະໂຄດເຊື້ອ ໄປຫຼົງຍ້ອງເພິ່ນວ່າດີ ຫຼາຍເນີ
ຈົ່ງມາພາກັນສ້າງ ປະເທດລາວໃຫ້ເຮືອງຮຸ່ງ ແດ່ເນີ
ຝູງລາວທຸກເຜົ່າເຊື້ອ ຫາກລໍຖ້າແຕ່ໝູ່ເຮົາ ໃດເນີ "

ຈາກ ປູ່ສອນຫຼານ.
1923

# ຊີວະປະຫວັດ ພະຣາຊະຄູ ໂພນສະເມັກ
# ( ຍາຄູ ຂີ້ຫອມ )

*ຄົ້ນຄ້ວາ ແລະ ຮຽບຮຽງໂດຍ :*
*ຄຳເພົາ ພອນແກ້ວ*

ເພື່ອເປັນການປະກອບເຂົ້າໃນປະຫວັດສາດເມືອງໂຂງ, ຊຶ່ງຈະເປັນຕອນໜຶ່ງຂອງປຶ້ມ " ເມືອງໂຂງ , ໃນອະດີດ ແລະ ປັດຈຸບັນ "ທີ່ຈະອອກໃນມໍ່ໆນີ້,ຂ້າພະເຈົ້າຈຳເປັນໄດ້ພະຍາຍາມຄົ້ນຄ້ວາປະຫວັດຣາຊະຄູ ໂພນສະເມັກ ( ຍາຄູ ຂີ້ຫອມ ), ຜູ້ທີ່ຍົກເອົາຈານຫວດຂຶ້ນເປັນເຈົ້າເມືອງໆໂຂງຜູ້ທຳອິດ. ຖ້າເຮົາຫາກບໍ່ຊອກຫາຄວາມກະຈ່າງແຈ້ງຂອງພະຣາຊະຄູ ໂພນສະເມັກນີ້ກ່ອນ, ເຮົາກໍບໍ່ສາມາດເຂົ້າໃຈໄດ້ດີວ່າປະຫວັດສາດເມືອງໂຂງ ຕິດພັນກັບປະຫວັດສາດຂອງປະເທດລາວລ້ານຊ້າງໄດ້ຄືແນວໃດ.

ການຄົ້ນຄ້ວາຂອງຂ້າພະເຈົ້າພາໃຫ້ເຊື່ອມໂຍງໄປເຖິງເອກະສານຕ່າງໆຂຽນໄວ້ໂດຍຄົນລາວ ແລະຄົນ"ອີສານ"ຂອງປະເທດໄທໃນປັດຈຸບັນ. ເອກະສານເຫຼົ່ານີ້ໄດ້ຂຽນເປັນເອກະພາບກັນວ່າ: " ຫຼວງພໍ່ ໂພນສະເມັກ " ເກີດຢູ່ບ້ານກະລືມ ( ເທືອກເຂົາພູພານ ), ອຳເພີ ບ້ານຜື, ຈັງຫວັດອຸດອນທານີ ( ປະເທດໄທໃນປັດຈຸບັນ ). ເວົ້າພຽງນີ້, ຄົນລາວຫຼາຍຄົນຍິ່ງຈະສົນໃຈຕື່ມໄປອີກວ່າ ເປັນຫຍັງຈຶ່ງວ່າ: " ຫຼວງພໍ່ ໂພນສະເມັກ " ? ເພິ່ນເປັນຄົນລາວ ຫຼືຄົນໄທ ?...

ຈັງຫວັດ ອຸດອນທານີ ກໍເໝືອນກັບຫຼາຍຈັງຫວັດຂອງພາກອີສານຂອງໄທ ຖືກຕັດອອກຈາກອານາຈັກລາວລ້ານຊ້າງໂດຍຊື່ນເຊີງ ໂດຍສັນຍາຝຣັ່ງເສດ ແລະ ສະຫຍາມ ໃນສະໄໝ ຣາຊະການທີ 5 (1851-1910) ໃນຕອນນີ້, ຂໍໄຂວົງເລັບໄວ້ເລັກນ້ອຍ ເພື່ອທົບທວນຄືນປະຫວັດສາດລາວ-ໄທສະເພາະຜູ້ທີ່ບໍ່ທັນຮູ້ດີປານໃດ. ( ໄທກ່າວໄວ້ໃນປຶ້ມ " ໄທແລນດ໌ແອັຕ

ລາສ " Thailand Atlas ) ຮຽບຮຽງໂດຍ: ຜູ້ຊ່ວຍສາສະດາຈານ ວິໂຣດ ອຽມຈະເຣີນ, ສົມກຽດພູ່ລະທິງ ແລະ ສິດາຊ່ວຍວົງ, ພິມເຜີຍແຜ່ ພ.ສ. 2547 ( ຄ.ສ. 2004 ) 172 ໜ້າ.ພາກປະຫວັດສາດໄທ ໂດຍຫຍໍ້ໃນປື້ມ ຫົວນີ້ເພິ່ນແບ່ງເປັນ 7 ຫົວຂໍ້ຄື: ( 1 ) ແນວຄິດກ່ຽວກັບຄວາມເປັນມາຂອງ ຊົນຊາດໄທ ຊຶ່ງແບ່ງເປັນສອງຂໍ້ຍ່ອຍອີກຄື: 1.1 ແນວຄິດທີ່ເຊື່ອວ່າ ຄົນໄທ ອົບພະຍົບມາຈາກປະເທດຈີນ, 1.2 ແນວຄິດທີ່ເຊື່ອວ່າ ຊົນຊາດໄທມີ ຖິ່ນຖານ ດັ້ງເດີມ ຢູ່ໃນບໍລິເວນພາກພື້ນເອເຊຍຕາເວັນອອກສຽງໄຕ້.( 2 ) ພັດທະນາການຂອງຊຸມຊົນ ບູຮານສະໄໝກ່ອນປະຫວັດສາດໃນປະເທດ ໄທ. ( 3 ) ແຄວ້ນບູຮານໃນດິນແດນປະເທດໄທ. ( 4 ) ປະຫວັດສາດໄທ ສະໄໝ ສຸໂຂໄທໂດຍສັງເຂບ; ຊຶ່ງເລີ່ມແຕ່ ພ.ສ. 1792 ຫຼື ( ຄ.ສ. 1249 ) ເຖິງ ພ.ສ. 2006 ຫຼື ( ຄ.ສ. 1463 ). (5) ປະຫວັດສາດໄທສະໄໝອາຍຸທະຍາ ໂດຍ ສັງເຂບ. ຊຶ່ງເລີ່ມຈາກສະໄໝພະເຈົ້າອູ່ທອງ, ພ.ສ. 1893 ຫຼື ( ຄ.ສ. 1350 ) ເຖິງສະໄໝສົມເດັດພະເຈົ້າ ຕາກສິນ ມະຫາຣາດ, ພ.ສ. 2310 ຫຼື ( ຄ.ສ 1767).(6)ປະຫວັດສາດໄທສະໄໝ ທົນບູຣີໂດຍສັງເຂບ;ຄືເລີ່ມແຕ່ສົມເດັດ ພະເຈົ້າຕາກສິນ ( ພ.ສ. 2310 / ຄ.ສ. 1767 ) ເຖິງສະໄໝຣັດຕະນະໂກສິນ ( ພ.ສ. 2325 / ຄ.ສ. 1782 ). ຊຶ່ງເປັນໄລຍະພຽງ 15 ປີ ເທົ່ານັ້ນ. ( 7 ) ປະຫວັດສາດໄທ ໃນສະໄໝຣັດຕະນະໂກສິນ ໂດຍສັງເຂບ; ຄືແຕ່ ພ.ສ. 2325 / ຄ.ສ. 1782 ເຖິງປັດຈຸບັນ, ມີ 224 ປີ; ຄືແຕ່ ພະບາດສົມເດັດ ພະພຸດທະຍອດຟ້າ ຈຸລາໂລກ ມະຫາຣາດ ( ຣາຊະການທີ່ 1 ) ເຖິງພະບາດ ສົມເດັດພະປຣະມິນ ທຣະມະຫາພູມິພົນ ອະດຸນຍະເດດ(ຣາດຊະການທີ່ 9) ຂໍອັດວົງເລັບໄວ້ກ່ອນ.

ສະເພາະຈັງຫວັດອຸດອນທານີ ຊຶ່ງເຂົ້າໃຈກັນວ່າຫຼວງພໍ່ ໂພນສະເມັກ ເກີດຢູ່ບ້ານກະລຶມ, ອຳເພີພືນັ້ນ, ຄົງຈະແມ່ນແທ້. ເພາະເປັນສະຖານທີ່ບໍ່ ຫ່າງໄກຈາກເມືອງວຽງຈັນພໍເທົ່າໃດ. ອີກຢ່າງໜຶ່ງໃນສະໄໝນັ້ນ ( ລະຫ່ວາງ 1660 ຫາ 1690 ), ເມືອງວຽງຈັນ ກໍອາດເປັນເມືອງໃຫຍ່ກ່ວາໝູ່ ໃນບໍລິເວນ

ນັ້ນເພາະບໍ່ທັນຖືກທຳລາຍດ້ວຍກອງທັບສະຫຍາມ, ທັງຄົງເປັນເມືອງທີ່ດຶງດູດຜູ້ຄົນທ້ອງຖິ່ນໃກ້ຄຽງເຂົ້າມາຮ່ຳຮຽນຫຼາຍສົມຄວນ.[1]

ໃນປຶ້ມ " ໄທແລນດ໌ ແອດລາສ " ທີ່ວ່ານີ້, ຍັງໄດ້ກ່າວກ່ຽວກັບຈັງຫວັດອຸດອນວ່າ: " ອຸດອນທານີ ມີຊື່ເດີມວ່າ : ບ້ານເດື່ອໝາກແຂ້ງ " ແລະ ຕໍ່ມາໃນສະໄໝຣາຊະການທີ 5 (ພ.ສ.2411-2453 ຫຼື ຄ.ສ. 1868-1910) ໄດ້ມີຄຳສັ່ງໃຫ້ປ່ຽນເປັນເມືອງ ອຸດອນທານີ. ພູມມີປະເທດເປັນພື້ນທີ່ຮາບແລະສີແດງເນີນໆ, ທາງທິດຕາເວັນຕົກເປັນພື້ນທີ່ຮາບພຽງ ແລະ ອ່ຽງລົງສູ່ແມ່ນ້ຳຂອງ, ມີພູເຂົາຕິດກັນເປັນສາຍພູຍາວຕາມເຂດແດນຂອງຈັງຫວັດຕິດກັບເບື້ອງຈັງຫວັດເລີຍ, ແລະ ທາງທິດໃຕ້ຂອງຈັງຫວັດມີແມ່ນ້ຳສົງຄາມໄຫຼແບ່ງເປັນເຂດແດນກັນກັບ ຈັງຫວັດສະກົນນະຄອນ. ເມືອງອຸດອນທານີຕັ້ງຢູ່ຫ່າງໄກຈາກບາງກອກ, ທີ່ຫາກໍ່ສ້າງຕັ້ງປີຄ.ສ. 1782, ປະມານ 564 ກິໂລແມັດ. ມີເນື້ອທີ່ 11.730 ຕາລາງກິໂລແມັດ... " ອຳເພີຜືນີ້, ແຕ່ກ່ອນມີຊື່ວ່າເມືອງພານ ເພາະຢູ່ຕີນພູພານ. ປັດຈຸບັນເປັນບ່ອນທ່ອງທ່ຽວທີ່ມີຊື່ສຽງຂອງຈັງຫວັດ ເພາະທາງຈັງຫວັດຈັດໃຫ້ເປັນ " ອຸທະຍານປະຫວັດສາດພູພະບາດ, ອຳເພີບ້ານຜື ". ຖ້າເຮົາຂີ່ລົດຍົນໄປແຕ່ວຽງຈັນຫາອຸດອນ, ກ່ອນຈະເຂົ້າໃນເມືອງ ຍັງປະມານ 22 ກິໂລແມັດ, ຕ້ອງໂງ້ງເບື້ອງຂວາມືເຂົ້າຫາອຳເພີບ້ານຜື ຕາມເສັ້ນທາງໝາຍເລກ 2021, ເຂົ້າໄປປະມານ 43 ກິໂລແມັດ ກໍເຖິງອຳເພີບ້ານຜື, ແລ້ວຕໍ່ຈາກອຳເພີໄປອີກຕາມເສັ້ນທາງໝາຍເລກ 2348 ປະມານ 14 ກິໂລແມັດ ແລະ ມີ

---

[1] ໝາຍເຫດ: ປະຫວັດສາດລາວເຫຼັ້ມທີ VII, ພາກ 8, ຕອນ 2, ຂອງມະຫາຄຳຈຳປາ ແກ້ວມະນີ ພິມໄວ້ປີ 1980 ໂດຍກົມຄົ້ນຄວ້າຮຽບຮຽງ, ໄດ້ກ່າວວ່າ " ໃນສະໄໝ ພະເຈົ້າສຸລິຍະວົງສາ ທຳມິກະລາດ ( 1638-1694 ) ມີພະສົງຈາກບັນດາອານາຈັກໃກ້ຄຽງເຂົ້າມາຮ່ຳຮຽນຢູ່ຕາມວັດໃຫຍ່ໆຂອງວຽງຈັນເປັນພັນໆອົງ".

ທາງແຍກຂວາມືອີກປະມານ 2 ກິໂລແມັດ ກໍເຖິງອຸທະຍານປະຫວັດສາດ ພູພະບາດ ຕັ້ງຢູ່ບໍລິເວນເຊີງເຂົາ ( ເນີນພູ ) ພານ, ຊຶ່ງເປັນທີ່ຕັ້ງ ຂອງສູນບໍລິການນັກທ່ອງທ່ຽວຢູ່ທາງດ້ານຂວາມື. ຖ້າບໍ່ຢາກໄປໄກ, ຈະຂຶ້ນຈາກອຳເພີທ່າບໍ່ນີ້ໄປຫາ ອຳເພີບ້ານຜື ກໍມີແຕ່ 22 ກິໂລແມັດ.

ອີງຕາມບົດຂຽນໂດຍ: ນັກວິຊາການໄທ - ລາວ ຊື່ລິດສີນາດ ແລະ ສົມໝາຍເປັມຈິດ ແລະ ຂອງມະຫາຈັນ ອິນທຸພິລາດ ຊຶ່ງອາຈານສຸຈິດ ວົງເທດ, ບັນນາທິການວາຣະສານສິລະປະວັດທະນະທຳ ( ສະບັບພິເສດ ), ໄດ້ລວບລວມ ແລະ ຈັດພິມອອກມີຂໍ້ຄວາມດັ່ງຕໍ່ໄປນີ້:

" ເຈົ້າພໍ່ ຣາຊະຄຣູຫຼວງ ໂພນສະເມັກ " ( ທ່ານ ຣາຊະຄຣູຂີ້ຫອມ ) ເປັນຊື່ທີ່ປະກົດຢູ່ບົນຫຼຽນທີ່ລະນຶກໃນງານ ພະຣາຊະພິທີບັນຈຸພຣະອຸຣັງຄະທາດທີ່ວັດພະທາດພະນົມ ວໍຣະມະຫາວິຫານ ອຳເພີທາດພະນົມ, ຈັງຫວັດນະຄອນພະນົມ ເມື່ອວັນທີ 21-23 ເດືອນມີນາ 1979. ສ່ວນຊື່ທີ່ເອີ້ນກັນທົ່ວໄປ ແລະ ເປັນທີ່ຄຸ້ນເຄີຍດີ ຊຶ່ງຈະໃຊ້ໄປຕະຫຼອດໃນບົດນີ້ຄື <u>**ພຣະຄູ ໂພນສະເມັກ**</u>, ພຣະຄູ ຂີ້ຫອມ, ຫຼື ຍາຄູຂີ້ຫອມ, ຕາມພາສາລາວຊາວບ້ານ ທີ່ຮູ້ກັນດີທັງສອງຝັ່ງແມ່ນ້ຳຂອງ.

ທ່ານພຣະຄູ ໂພນສະເມັກ ເປັນພະມະຫາເຖຣະທີ່ມີຊື່ສຽງໂດ່ງດັງທີ່ສຸດໃນສະໄໝ " **ກຣຸງລ້ານຊ້າງ** " ( ຣາຊະອານາຈັກລາວລ້ານຊ້າງ ) ຫຼື ກຸງສີສັດຕະນາຄະນະຫຸດ, ເມື່ອ 350 ປີກວ່າໆມາແລ້ວ. ເຖິງຢ່າງໃດກໍຕາມ, ທຸກວັນນີ້ຊື່ຂອງທ່ານກໍຍັງຝັງໃຈບັນດາພຸດທະສາສະນິກະຊົນ ລາວທັງສອງຝັ່ງໂຂງຢູ່, ທ່ານມີຊີວິດພິດສະດານເປັນທີ່ໜ້າສົນໃຈຢ່າງຍິ່ງ ຊຶ່ງປະກົດໃຫ້ເຫັນໃນຊີວະປະຫວັດຂອງທ່ານເປັນບາງຕອນໆເກັບມາເລົ່າໃຫ້ຮູ້ໄວ້ດັ່ງຕໍ່ໄປນີ້:

## 1. ( ຕອນ ) ໄດ້ນິມິດຝັນ ອັນມະຫັດສະຈັນ ( ຫຼື ເຂົ້າຄວາມຝັນ ):[1]

ເມື່ອ ພ.ສ. 2186 ( ຫຼື ຄ.ສ. 1643 ) ໃນຕອນກາງຄືນວັນໜຶ່ງເວລາທີ່ພຣະຄຣູຍອດແກ້ວ ແຫ່ງກຸງວຽງຈັນ, ຣາຊະອານາຈັກລ້ານຊ້າງ, ນອນໃນ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ